# ການບາດເຈັບສະໝອງຮ້າຍແຮງ (TBI) ສະພາແນະນຳການປະສານງານຮ່ວມມືຍຸດທະວິທີຂອງຣັດວໍຊິງຕັນ

**ສະພາແນະນຳການປະສານງານຮ່ວມມືຍຸດທະວິທີຂອງຣັດວໍຊິງຕັນເຣື່ອງການບາດເຈັບສະໝອງຮ້າຍແຮງ** (TBI Council) ໄດ້ຖືກກໍ່ຕັ້ງຂື້ນມາເພື່ອຈະອູ້ມຊູຊຸມຊົນ (RCW 74.31). ມັນປະກອບດ້ວຍສະມາຊິກ **25** ຄົນຈາກພາກສ່ວນສາທາຣະນະຊົນແລະເອກຊົນ,ບຸກຄົນທີ່ມີຖີ່ແລະສະມາຊິກຄອບຄົວຂອງເຂົາເຈົ້າ,ຜູ້ໃຫ້ການບໍຣິການພະຍາບານແລະຊຸມຊົນ,ຜູ້ເບີ່ງແຍງດູແລ,ປະເທດຊົນເຜົ່າທີ່ມີປະຊາທິປະໄຕ,ແລະຫ້ອງການຂອງຣັດ.

**TBI Council** ປະສານງານຮ່ວມມືນຳແລະແນະນຳ **Department of Social and Health Services (DSHS)** **ແລະຫ້ອງການອື່ນໆຂອງຣັດໃຫ້:**

- ແຜ່ຜາຍຄວາມຮັບຮູ້ແລະການສຶກສາກ່ຽວກັບTBI ແລະການປ້ອງກັນ
- ຊີ້ບອກຕົວແລະແນະນຳໃນຄວາມຕ້ອງການແລະຊ່ອງວ່າງໃນການບໍຣິການ TBI,ຊັບພະຍາກອນ, ແລະໂຄງການ
- ກໍ່ຕັ້ງການປະສານງານຮ່ວມມືແລະການປະສານງານທົ່ວພາກສ່ວນສາທາຣະນະ/ເອກຊົນ

**TBI ສາມາດມີຜົນສະທ້ອນເຖິງທຸກໆຄົນ.**ເພື່ອຈະຮັບໃຊ້ປະຊາຊົນມາກມາຍ,TBI Council ແລະ DSHS ສະເນີໃຫ້ມີການອູ້ມຊູ,ຣາຍຣະອຽດແລະການສົ່ງຕໍ່,ແລະການປົກປ້ອງຊັບພະຍາກອນ.

- **ຣາຍຣະອຽດແລະການສົ່ງຕ (I&R):** ໃນການປະສານງານຮ່ວມມືນຳ WA211, ທຸກໆຄົນທີ່ປະເຊີນໜ້ານຳ TBI ຫລືຄວາມຕ້ອງການທີ່ພົວພັນນຳ TBI ສາມາດໂທຫາ 2-1-1 ເພື່ອຈະເວົ້າລົມນຳຜູ້ຊ່ຽວຊານຊ່ວຍເຫລືອທີ່ຖືກຝຶກຝົນມາກ່ຽວກັບການສົ່ງຕໍ່ໄປຫາແຫລ່ງຊ່ວຍເຫລືອຕັ້ງຢູ່ໃນຊຸມຊົນ.
- **ການຂົນຂວາຍຄວາມຮັບຮູ້ຂອງສາທາຣະນະຊົນ:**ຄວາມຮັບຮູ້ຂອງປະຊາຊົນໄດ້ຖືກກໍ່ຕັ້ງຂື້ນມາຜ່ານການສຶກສາ,ການລົງພື້ນຖານ,ແລະການສະແດງເປັນກຸນແຈຕໍ່ການປ້ອງກັນແລະການປິ່ນປົວ TBI.
- **ແຫລ່ງຊ່ວຍເຫລືກຸ່ມອູ້ມຊູ:**ກຸ່ມອູ້ມຊູທາງອອນລາຍນ໌ໄດ້ຂະຍາຍໂອກາດໃຫ້ແກ່ທຸກໆພາກສ່ວນຂອງຣັດ,ກຸ່ມອູ້ມຊູເນັ້ນໜັກໃສ່ການຕິດຕໍ່ພົວພັນແລະການສຶກສາທີ່ຊ່ວຍເຫລືອໃນການພັດທະນາຄວາມຮັບຮູ້ຣະຍະຍາວແລະຄວາມຊຳນານໃນການແກ້ໄຂບັນຫາເພື່ອຈະຊ່ວຍເຫລືອຜ່ານຜ່າອຸບປະສັກຕໍ່ການຊອກຫາຊີວິດທີ່ຕື່ມເຕັມ.
- [ເອກສານຊ່ວຍເຫລືອແລະປື້ມຝຶກຫັດ TBI](): ປື້ມຝຶກຫັດອັນນີ້ໄດ້ຖືກອອກແບບມາໃຫ້ເປັນແຫລ່ງຊ່ວຍເຫລືອສຳລັບບຸກຄົນຜູ້ທີ່ປະເຊີນໜ້ານຳ TBI ໃຫ້ເດີນທາງຜ່ານການພັກຟື້ນແລະການຝຶກຝົນໃຫ້ດີຄືນ.

## ຄວາມຕ້ອງການທົ່ວໄປທີ່ກ່ຽວພັນນຳTBI:




## ການປະສານງານຮ່ວມມືຕາມຫລັກການແລະການແນະນຳບອກ

ການປະສານງານຮ່ວມມືຕາມຫລັກການຈະສົມດູນຄວາມສາມາດຂອງສະພາທີ່ຈະແຜ່ຜາຍຄວາມຮັບຮູ້ຂອງສາທາຣະນະຊົນແລະການສຶກສາ,ການປ້ອງກັນການບາດເຈັບແລະຄວາມຮຸນແຮງ,ແລະການເຂົ້າເຖິງແຫລ່ງຊ່ວຍເຫລືອ.

ຄວາມພະຍາຍາມຮ່ວມກັນເຫລົ່ານີ້ຈະເພີ້ມຄວາມສາມາດເຂົ້າເຖິງສຳລັບທຸກໆຄົນ,ດ້ວຍຄວາມພະຍາຍາມທີ່ມີເປົ້າໝາຍຊຶ່ງລວມເອົາ,ແຕ່ບໍ່ຈຳກັດໄປເຖິງ,ກຸ່ມຜົວພັນແລະຊົນເຜົ່າຕາມປະເພນີ,ສະມາຊິກທະຫານແລະນັກຮົບເກົ່າ,ບຸກຄົນທີ່ປະເຊີນໜ້ານຳການບໍ່ມີເຮືອນຢູ່,ບຸກຄົນຢູ່ໃນສະຖານທີ່ດັດສ້າງແລະຄຸມຂັງ,ຜູ້ລອດຊີວິດຂອງຄວາມຮຸນແຮງນຳຂາຄູ່ຮ່ວມຮັກ,ແລະບຸກຄົນຢູ່ເຂດຊົນນະບົດ,

### ຕົວຢ່າງຂອງ TBI Council Partnerships:

- **ແຮງງານແລະການພັດທະນາວິຊາຊີບ:** ການໃຫ້ໂອກາດໃນການສຶກສາດ້ານການພັດທະນາວິຊາຊີບແລະແຮງງານ.
- **Safe Kids Washington ແລະ WA Traffic Safety Commission:** ການຮັກສາເດັກນ້ອຍໃຫ້ປອດພັຍໂດຍຜ່ານການຮຽນຮູ້ຄວາມປອດພັຍດ້ານການຈາຣະຈອນ,ຕະລາດນັດສຸຂະພາບ,ການປ້ອງກັນການບາດເຈັບ,ແລະການສະແດງແລະການແຈກຢາຍໝວກກັນກະທົບແລະຕັ່ງເດັກນ້ອຍໃສ່ຣົດ.
- **TBI ໃນໂຄງການທົດລອງໃນສູນດັດສ້າງ:** ການກໍ່ສ້າງຄວາມຮັບຮູ້ແລະການອູ້ມຊູໃນຣະບົບການດັດສ້າງທີ່ມີ TBI ການກັ່ນກອງການສຶກສາຈິດວິທະຍາ,ກຸ່ມອູ້ມຊູ,ແຫລ່ງຊ່ວຍເຫລືອການເຂົ້າມາຄືນ,ແລະການພັດທະນາຈິຊາການສຳລັບການສຶກສາແຮງງານ
- **ຂໍ້ມູນແລະການຄົ້ນຄວ້າ:** ການປະສານງານຮ່ວມມືໃນການເກັບກຳເອົາຂໍ້ມູນ TBI ແລະການຄົ້ນຄວ້າເພື່ອຈະເຂົ້າໃຈດີກວ່າເກົ່າໃນປະສົບປະການດຳຣົງຊີວິດຂອງບຸກຄົນທີ່ມີ TBI, ຜູ້ເບິ່ງແຍງດູແລ,ແລະຜູ້ບໍ່ຣິການ
- **ຄວາມຮັບຮູ້ຂອງສາທາຣະນະຊົນແລະການພັດທະນາແຫລ່ງຊ່ວຍເຫລືອ:** ການຮ່ວມມືກັນນຳຫ້ອງການຂອງຣັດແລະທ້ອງຖິ່ນ,ໂຮງຮຽນ,ກຸ່ມຊຸມຊົນ,ຜູ້ບໍຣິການ,ແລະຄົນອື່ນໆເພື່ອຈະເພີ້ມຄວາມຮັບຮູ້ແລະການເຂົ້າເຖິງຂື້ນໂດຍຜ່ານການລົງພື້ນຖານແລະການພັດທະນາແຫລ່ງຊ່ວຍເຫລືອທີ່ຖືກຕັ້ງເປົ້າໝາຍໄວ້ແລ້ວ

**ສະແກນບ່ອນນີ້ເພື່ອຈະຮຽນຮູ້ເພີ້ມເຕີມ!**

Washington State Department of Social & Health Services
*Transforming lives*

DSHS 22-1985 LA (4/24) Laotian

ການບາດເຈັບສະໝອງຮ້າຍແຮງ| **DSHS (wa.gov)**